## ສສຊ ເຂດ I ລົງພົບປະປະຊາຊົນເມືອງນາຊາຍທອງ.

*(ວຈໝ): ຄະນະສະມາຊິກສະພາແຫ່ງຊາດ ຊຸດທີ VI ປະຈຳເຂດເລືອດຕັ້ງທີ 1 ນະຄອນຫຼວງວຽງຈັນ ສືບຕໍ່ລົງພົບປະໂອ້ລົບພະນັກງານການນຳ ແລະ ພໍ່ແມ່ປະຊາຊົນ ເມືອງຫນາຊາຍທອງ ໃນວັນທີ 30 ສິງຫາ 2010 ເຊິ່ງການລົງພົບປະເທື່ອນີ້ໄດ້ແບ່ງອອກເປັນ 3 ຈຸດຄື: ຈຸທີ 1 ລົງພົບປະພໍ່ແມ່ປະຊາຊົນບ້ານນ້ຳກຽງ 9 ບ້ານ ແລະ ກຸ້ມບ້ານອີໄລ່ 12 ບ້ານ ຊຶ່ງນຳໂດຍທ່ານ ນາງ ບຸນຍົງ ບຸບຜາ ແລະ ທ່ານ ບຸນປອນ ສີຫາລາດ ຈຸດທີ 2 ລົງພົບປະປະຊາຊົນກຸ້ມບ້ານ ໂພນທອງ 10 ບ້ານ ແລະ ກຸ້ມບ້ານນາຂ່າ 8 ບ້ານ ນຳໂດຍທ່ານ ນາງ ວັນເພັງ ແກ້ວນະຄອນ ແລະ ທ່ານ ພັນເອກ ຄຳພັດ ເພີບບູດາ ຈຸທີ 3 ລົງພົບປະປະຊາຊົນກຸ້ມບ້ານນາຊາຍ ມີ 9 ບ້ານ ນຳໂດຍທ່ານ ອຸ່ນເຮືອນ ໂພທິລາດ ແລະ ທ່ານ ສົມພຽນ ໄຊຍະເດດ ແຕ່ລະຈຸດມີຄະນະພັກເມືອງ ພະນັກງານທີ່ກ່ຽວຂ້ອງ ຫົວໜ້າກຸ່ມ ເລຂາພັກກຸ້ມບ້ານ ນາຍບ້ານ ແລະ ປະຊາຊົນແຕ່ລະບ້ານເຂົ້າຮ່ວມ.

ການລົງພົບປະຄັ້ງນີ້ຄະນະສະມາຊິກສະພາແຫ່ງຊາດເຂດ I ໄດ້ຮັບຟັງການລາຍງານການພັດທະນາ ເສດຖະກິດ-ສັງຄົມຂອງແຕ່ລະກຸ້ມ ຈາກນັ້ນຄະນະໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນ ເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ 6 ພ້ອມທັງເຜີຍແຜ່ເອກະສານສຳຄັນຂອງຊາດ ຂອງພັກ ເອກະສານປະຫວັດສາດ ຄວາມເປັນມາ 450 ປີ ຂອງນະຄອນຫຼວງວຽງຈັນເພື່ອໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃນຢ່າງເລິກເຊິ່ງ ທັງປະກອບສ່ວນສ້າງຂະບວນການຕ້ອນຮັບ ກອງປະຊຸມໃຫ່ຍຄັ້ງທີ V ຂອງອົງຄະນະພັກນະຄອນຫຼວງ ພ້ອມນີ້ຜູ້ແທນສະພາຍັງໄດ້ເປີດໂອກາດໃຫ້ພໍ່ແມ່ປະຊາຊົນ ໄດ້ປະກອບຄຳຄິດຄຳເຫັນ ແລະ ສະເໜີບັນຫາຕ່າງໆ ເພື່ອຈະນຳເອົາໄປສະເໜີຕໍ່ລັດຖະບານ ກໍຄືພາກສ່ວນທີ່ກ່ຽວຂ້ອງ ຢູ່ກອງປະຊຸມສະໄໝສາມັນເທື່ອທີ X ຂອງສະພາແຫ່ງຊາດຊຸດທີ່ VI ພິຈາລະນາ